ນິທານຊາດົກ "ຊຸດມໍລະດົກວຽງຈັນ"

# ເຕມີຍະ ຊາຕະກະ

ແປງຈາກຄຳພີ ທະສະຊາຕະກະ

ແລະແຕ່ງເປັນຄຳກອນພາສາລາວ

**ໂດຍ ມະຫາສີລາ ວີຣະວົງສ໌**



ຈັດພິມໂດຍ ສຳນັກພິມດອກເກດ

ຮ່ວມກັບ ໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄພພ)

ດອກເກດ
DokkeD

# ເຕມິຍະ ຊາຕະກະ

ເຣື່ອງ

## ທ້າວ ເຕມິຍະກຸມມານ

ແປງຈາກຄຳພີ ທະສະຊາຕະກະ
ແລະ ແຕ່ງເປັນຄຳກອນພາສາລາວ

ໂດຍ


## ມະຫາສີລາ ວີຣະວົງສ໌





ເຕມີຍະຊາຕະກະ

ເຣື່ອງ

ທ້າວເຕມີຍະກຸມາຣ

ແປງຈາກຄັມພີຣ໌ທະສະຊາຕະກະ ແລະ

ແຕ່ງເປັນຄຳກາບພາສາລາວ

ໂດຍ

ມະຫາສິລາ - ວີຣະວົງສ໌

(ເປັນຂອງຫໍພຣະສມຸດປຣະເທສລາວ)

ພິມພ໌ເທື່ອທີ່ 1 : ໒໐໐໐ ສບັບ

ພຸທຸທະສັກຣາຊ ໒໔໗໕

ກຣິສັກຣາຊ ໑໙໓໒

ເຕມີຍະ ຊາຕະກະ
ເຣື່ອງ ທ້າວ ເຕມີຍະກຸມມານ
ແຕ່ງໂດຍ ມະຫາສີລາ ວີຣະວົງສ໌
ຮູບປະກອບ ຍາພໍ່ທິດພຸ, ຈິດຕະກອນ ຍຸກຕົ້ນຄິດຕະສະຕະວັດ ທີ 20
ແປງຈາກຄຳພີ ທະສະຊາຕະກະ ແລະແຕ່ງເປັນຄຳກອນພາສາລາວ ໂດຍ ມະຫາສີລາ ວີຣະວົງສ໌
(ເປັນຂອງຫໍພຣະສມຸດປະເທດລາວ ພິມເທື່ອທີ 1, 2000 ສະບັບ ພຸດທະສັກຣາດ 2475, ກຣິດສັກຣາດ 1932).
ພິມເທື່ອທີ່ 2: ປີ ຄ.ສ. 1972, ໂຮງຮຽນປະສິມຟ້າງຸ່ມ, ກະຊວງສຶກສາທິການ.
ພິມເທື່ອທີ 3: ປີ ຄ.ສ. 2010, 3000 ສະບັບ, ພ.ສ. 2553 (ຄ.ສ. 2010) ໂດຍ ສຳນັກພິມດອກເກດ ຮ່ວມກັບ
ໂຄງການ ພຸດທະສາສະໜາ ເພື່ອການພັດທະນາ (ຄພພ)
ພິມທີ່ ພະໄຊ ກຣາບຟິກ
ທະບຽນພິມເລກທີ: 226 ພຈ 25082010
ຈຳນວນ: 3000 ຫົວ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ
ສີລາ ວີຣະວົງສ໌
ເຕມີຍະ ຊາຕະກະ / ສີລາ ວີຣະວົງສ໌. ພິມຄັ້ງທີ 3. ວຽງຈັນ:
ສຳນັກພິມດອກເກດ ແລະໂຄງການພຸດທະສາສະໜາ ເພື່ອການພັດທະນາ(ຄພພ) 2010
100 ໜ້າ: ພາບປະກອບ 24 ຊມ. (ຊຸດນໍລະດົກວຽງຈັນ).
1. ນິທານພື້ນເມືອງ 2. ລາວ - ນິທານພື້ນເມືອງ ສີລາ I. ວີຣະວົງສ໌ II. ຊື່ຊຸດ.
398.204594 dc-21
ISBN 978-9932-07-009-1

ນິທານຊາດົກ "ຊຸດນໍລະດົກວຽງຈັນ"

# ເຕມິຍະ ຊາຕະກະ

ແປງຈາກຄຳພີ ທະສະຊາຕະກະ ແລະແຕ່ງເປັນຄຳກອນພາສາລາວ

## ໂດຍ ມະຫາສີລາ ວີຣະວົງສ໌



ສຳນັກພິມດອກເກດ ຮ່ວມກັບ
ໂຄງການພຸດທະສາສະໜາ ເພື່ອການພັດທະນາ (ຄພພ)

ສິງຫາ 2010

# ຄຳສະເໜີ ຂອງ ພຣະອາຈານ ສີທົນ ໄຊຍະວົງສອນ

ຮອງປະທານ ຄ.ພ.ພ. ແລະຮອງປະທານ ອພສ. ເມືອງນາຊາຍທອງ, ເຈົ້າອາວາດ ວັດວິເວກ
ສະຖິດປ່າມ່ວງ ພິມມະພານ, ບ້ານ ນາຄູນນ້ອຍ, ເມືອງນາຊາຍທອງ, ນະຄອນຫຼວງວຽງຈັນ.

## ຄວາມສຳຄັນຂອງນິທານຊາດົກ ຕໍ່ການສຶກສາ ພຸດທະສາສະໜາ

ທົດສະຊາດຊາດົກ ເປັນໜັງສືທີ່ທາງ ໂຄງການ ພຸດທະສາສະໜາເພື່ອການພັດທະນາ(ຄພພ) ໄດ້ໃຫ້ຄວາມສຳຄັນແລະຈັດພິມຂຶ້ນ ເພື່ອຕອບສະໜອງແລະເສີມຄວາມຮູ້ທາງດ້ານພຸດທະສາສະໜາ ເຊິ່ງຄົນລາວເຮົານັບຖື ກວມເອົາເປີເຊັນຫຼາຍກວ່າໝູ່ໃນບັນດາສາສະໜາທັງປວງໃນ ສ.ປ.ປ.ລາວ. ເນື່ອງຈາກວ່າ ປັດຈຸບັນນີ້ ອອກຕົນຍາດໂຍມ ນັກຮຽນ ແລະນັກສຶກສາ ສ່ວນໜຶ່ງຍັງບໍ່ເຫັນເຖິງຄວາມສຳຄັນແລະຄວາມໝາຍຂອງການບຳເພັນພຽນປາລະມີ ຂອງພຣະພຸດທະເຈົ້າຢ່າງເລິກເຊິ່ງ ອີກປະການນຶ່ງ ກໍເປັນພຽງການນິຍົມຊົມຊອບກັນໃນການທີ່ຈະໄດ້ເປັນສັດທາແຕ້ມຮູບເລື່ອງທົດສະຊາດລົງໃສ່ຝາຜະໜັງສິມແລະສາລາເທົ່ານັ້ນ ແຕ່ຍັງຂາດຂໍ້ມູນທີ່ເປັນຮາກເຫງົ້າຂອງເນື້ອເລື່ອງຫົວໃຈຂອງເຫດການທີ່ເຮັດໃຫ້ເຈົ້າຊາຍອົງນຶ່ງໄດ້ກາຍມາເປັນພຣະພຸດທະເຈົ້າ ຫຼືພຣະສາສະດາແຫ່ງສາສະໜາພຸດທີ່ນັບຖືກັນມາ ເທົ້າເຖິງປັດຈຸບັນນີ້.

ໜັງສືເລື່ອງນີ້ ນອກຈາກໄດ້ພັນລະນາເຖິງການບຳເພັນພຽນໃນຊາດນຶ່ງທີ່ພຣະພຸດທະອົງໃຊ້ຊາດເປັນພຣະໂພທິສັດແລ້ວ ຍັງໄດ້ສອດແຊກຫຼັກທຳຄຳສອນຫຼາຍຢ່າງ ເຊິ່ງສະແດງເຖິງປາລະມີ 30 ທັດ ແລະປົດສະໜາທຳ ຕະຫຼອດເຖິງຫຼັກການດຳລົງຊີວິດທີ່ດີງາມອີກດ້ວຍ. ເຫດນີ້ ທາງໂຄງການພຸດທະສາສະໜາເພື່ອການພັດທະນາ ຈຶ່ງໄດ້ຈັດພິມຂຶ້ນມາ ເພື່ອແຈກຢາຍເຜີຍແຜ່ໃຫ້ ເປັນທຳມະທານແກ່ຜູ້ໃຝ່ຮູ້ໃຝ່ຮຽນທັງຫຼາຍ ທັງເປັນການນຳໃຊ້ສືບສານຜົນງານຂອງບຸພາຈານ ໃຫ້ເປັນປະໂຫຍດ ແລະເປັນແບບເປັນຢ່າງແກ່ຜູ້ສືບທອດພຣະພຸດທະສາສະໜາຮຸ່ນໃໝ່ ໃຫ້ສົມກັບດັ່ງຄຳມຸ່ງຫວັງຂອງ ອະດີດເຈົ້າມະຫາອຸປະຮາດ ເພັດຊະຣາດ ອົງນາຍົກແຫ່ງພຸດທະບັນດິດສະພາຈັນທະບຸຣີ ແລະທ່ານຜູ້ແຕ່ງ ຄື ມົ້ລາງອາຈານ ມະຫາສິລາ ວີຣະວົງສ໌ ທີ່ໝາຍໝັ້ນຢາກໃຫ້ມີທົດສະຊາດຊາດົກ ຫຼື ນິທານຊາດົກທັງ 10 ເລື່ອງໃນຮູບກອນອ່ານພາສາລາວງ່າຍໆ ອອກມາເຜີຍແຜ່ຢ່າງກວ້າງຂວາງສູ່ມະຫາຊົນ.

ເຖິງວ່າຍຸກສະໄໝຂອງ ບຸພາຈານທັງສອງ ໄດ້ຜ່ານເລີຍມາເກືອບຂ້ອນສະຕະວັດ(1932 -2010) ແລ້ວ ແຕ່ຜົນງານການປະດິດແຕ່ງ ກໍຫາກຊົງຄຸນຄ່າເຕັມປ່ຽມ ທັງດ້ານວັນນະສິນ ກໍຄືທຳມະສິນ.

ດັ່ງນັ້ນ ໃນການຈັດພິມຄັ້ງນີ້ ເພື່ອໃຫ້ສະດວກໃນການອ່ານ ນາງດວງເດືອນ ບຸນຍາວົງ ຜູ້ມີ

ຕົ້ນສະບັບສົມບູນ ຈຶ່ງປັບປຸງການຂຽນສະກົດຄຳອອກມາໃຫ້ຖືກຕ້ອງກັບຄວາມນິຍົມຂອງຍຸກນີ້ ຍົກເວັ້ນ ຄຳນຳຄຳອະທິບາຍ ຂອງບຸພາຈານທັ້ງສອງ ທີ່ຍັງຄົງຮັກສາຮູບແບບການຂຽນຕາມເກົ່າໄວ້ ທັງນີ້ເພື່ອຮັກສາຮ່ອງຮອຍ ປະຫວັດສາດໄວ້ໃຫ້ເປັນຂໍ້ມູນ ສຳລັບການສຶກສາຄົ້ນຄວ້າສືບຕໍ່ໄປ. ເພື່ອຄວາມເຂົ້າໃຈ ແຈບແຈ້ງຕື່ມໃນເນື້ອເລື່ອງ ທາງກອງບັນນາທິການຍັງໄດ້ຄັດເລືອກເອົາຄຳສັບ-ສຳນວນ ວະລີ ຈຳນວນນຶ່ງ ມາແປແລະອະທິບາຍຕື່ມ ຢູ່ໃນທ້າຍເຫຼັ້ມ ແຕ່ບໍ່ເຖິງກັບຈັດລຳດັບອັກສອນ ຄື ຢູ່ສາລານຸກົມ ແຕ່ເຮັດໄປຕາມລຳດັບບົດ ແຕ່ຫາກຄຳໃດມີແລ້ວ ໃຊ້ແລ້ວ ອະທິບາຍໄວ້ແລ້ວ ກໍບໍ່ໄດ້ແປຊ້ຳອີກ ທ່ານຜູ້ອ່ານຈະສາມາດເຂົ້າໃຈໄດ້ເອງ.

ອາຕະມາ ຫວັງເປັນຢ່າງຍິ່ງວ່າ ໜັງສືເລື່ອງນີ້ ຈະມີສ່ວນຊ່ອຍໃຫ້ທ່ານຜູ້ອ່ານ ເຂົ້າໃຈເຖິງແກ່ນແທ້ຂອງການບຳເພັນພຮຽນປາລະມີແລະຄວາມມຸ່ງໝັ້ນທີ່ຈະກ້າວໄປສູ່ເປົ້າໝາຍທີ່ແທ້ຈິງໄດ້ຢ່າງມີຜົນສຳເລັດ.

ທີ່ສຳນັກງານຫ້ອງການ ຄພພ ວັດທາດຫຼວງເໜືອ ມ. ໄຊເຊດຖາ, ນະຄອນຫຼວງວຽງຈັນ
ເດືອນ ຕຸລາ ພ.ສ. 2553
ພຣະອາຈານ ສີທົນ ໄຊຍະວົງສອນ
ຄະນະ ອ.ພ.ສ. ເມືອງ ນາຊາຍທອງ, ຮອງປະທານ ຄ.ພ.ພ.

ເມືອງ ນາຊາຍທອງ

# ຄວາມໃນໃຈ ຂອງ ສຳນັກພິມ

ດົນນານມາແລ້ວ ຂ້າພະເຈົ້າໄດ້ຍິນຊື່ ນິທານຊາດົກ ເລື່ອງທ້າວເຕເມ ທ້າວສຸວັນນະສາມ ແລະທ້າວຊະນົກກຸມານ ທີ່ມື້ລາງພໍ່ ແຕ່ງໄວ້ຕັ້ງແຕ່ລາວເພິ່ນເປັນຄູສອນຢູ່ໂຮງຮຽນປາລີ ແຕ່ກໍບໍ່ມີໂອກາດໄດ້ອ່ານ ເພາະບໍ່ພົບເຫັນປຶ້ມທັງສາມຫົວນີ້ຈັກເທື່ອ ເຖິງວ່າ ເຄີຍມີຜູ້ເອົາບາງບົດບາງຕອນແຊກເຂົ້າໄວ້ໃນຕຳລາ ຮຽນວິຊາພາສາລາວຍຸກຕົ້ນຊຸມປີ 1970 ຂອງໂຮງຮຽນປະສົມຟ້າງູ່ມກໍຕາມ ແຕ່ຂ້າພະເຈົ້າກໍບໍ່ໄດ້ໃສ່ໃຈຊອກຫາມາອ່ານ.

ຈົນມາຮອດປີ 2008 ເພື່ອນຊາວຕ່າງປະເທດ ທີ່ສົນໃຈສຶກສາສາສະໜາພຸດຢູ່ລາວຄົນໜຶ່ງ ໄດ້ນຳເອົາຕົ້ນສະບັບອັດສຳເນົາມາໃຫ້. ຂ້າພະເຈົ້າຈຶ່ງໄດ້ອ່ານຢ່າງລະອຽດທັງສາມເຫຼັ້ມແລ້ວ ກໍຕັ້ງປະນິທານວ່າ ຈະ ຕ້ອງຈັດພິມຜົນງານເຫຼົ່ານີ້ ອອກມາໃຫ້ໄດ້.

ເມື່ອໂຄງການພຸດທະສາສະໜາເພື່ອການພັດທະນາ(ຄພພ) ມີແຜນຈັດພິມປຶ້ມ ຕຳລາການສຶກສາດ້ານ ສາສະໜາ ປັດຊະຍາ ແລະວັນນະຄະດີຊາດົກ ອອກເຜີຍແຜ່, ຂ້າພະເຈົ້າຈຶ່ງນຳສະເໜີປຶ້ມທັງສາມເລື່ອງ ຕໍ່ພຣະອາຈານໃຫຍ່ ແລະຄະນະຮັບຜິດຊອບ ໂຄງການພິຈາລະນາ ຮ່ວມກັບປຶ້ມເລື່ອງອື່ນໆ.

ໃນນາມສຳນັກພິມດອກເກດ ຂ້າພະເຈົ້າ ຂໍຂອບໃຈມາຍັງ ດຣ.ກຣິກໍຣກິ ກູຣິນສະກິ, ດຣ.ບຸນທ່ຽງ ສິຣິປະພັນ ທີ່ໃຫ້ຢືມປຶ້ມຫາຍາກເຫຼັ້ມນີ້ ດ້ວຍວ່າມີພາບລາຍເສັ້ນສີມື ຍາພໍ່ທິດພຸແຕ້ມຂຶ້ນປະກອບນິທານ ທັງສາມເລື່ອງນີ້ ໂດຍສະເພາະເລື່ອງທ້າວເຕເມ ເປັນເຫຼັ້ມທຳອິດ ທີ່ຈັດພິມປຶ້ມອອກມາທ່ວງທັນກັບ ໂອກາດສະຫຼອງນະຄອນຫຼວງວຽງຈັນ 450 ພໍດີ, ຄົບ ຮອບ 105 ປີ ຊາຕະການ ຍາພໍ່ມະຫາສິລາ ວີຣະວົງສ໌, 110 ປີ ຊາຕະການ ຂອງຍາພໍ່ທິດພຸ, ສ່ວນເຫຼັ້ມອື່ນໆ ກໍຈະໄດ້ຈັດພິມໃນປີຕໍ່ໄປ,ທ່ານຜູ້ໃດມີຄວາມປະສົງຫຼືສົນໃຈບໍລິຈາກທຶນສົມທົບການພິມເພື່ອແຈກຢາຍ ເປັນທຳມະທານ ກະລຸນາ ແຈ້ງມາຍັງສຳນັກພິມ ດອກເກດ ຫຼື ທາງໂຄງການພຸດທະສາສະໜາເພື່ອການພັດທະນາໄດ້.

ຂໍອຸທິດ ສ່ວນກຸສົນຜົນບຸນ ທີ່ເກີດແຕ່ການຈັດພິມປຶ້ມເຫຼັ້ມນີ້ ແດ່ທ່ານຜູ້ມີພະຄຸນທີ່ກ່າວນາມມາຂ້າງ ເທິງທຸກທ່ານດ້ວຍ.

ວຽງຈັນ ວັນທີ 8 ສິງຫາ ພ.ສ. 2553

ສຳນັກພິມດອກເກດ

# ຄຳນຳ (ໃນການຈັດພິມຄັ້ງທີໜຶ່ງ)

ເມື່ອປະເທດລາວເຮົາໄດ້ຈັດການຕັ້ງຫໍພຣະສມຸດໃຫ້ເປັນທີ່ຮວບຮວມໜັງສືເກົ່າໃໝ່ທັງຫຼາຍຂຶ້ນໄວ້ແລ້ວດັ່ງນີ້ ກໍນັບວ່າເປັນປະໂຫຍດອັນຍິ່ງໃຫຍ່ແກ່ຊາດ ແລະສາສະໜາເຮົາຫຼາຍເຫຼືອທີ່ຈະພັນນະນາ ເພາະກ້າວ່າຫາກບໍ່ຕັ້ງຫໍພຣະສມຸດຂຶ້ນໄວ້ໃຫ້ເປັນບ່ອນ ຮວບຮວມໜັງສືແລ້ວຕໍ່ໄປພາຍໜ້າບັນດາໜັງສືຕ່າງໆຊຶ່ງມີຢູ່ໃນປະເທດເຮົາ ກໍຈະອັນຕະທານເສື່ອມສູນໄປ ຍ້ອນວ່າຢູ່ຊະຊາຍທົ່ວໄປແລະບໍ່ຕັ້ງໃຈຮັກສາ. ປະການໜຶ່ງເມື່ອເວລາ ມີຄວາມຕ້ອງການໄປຊອກຫາກໍລຳບາກ, ກ້າຫາກໄດ້ຮວບຮວມຫຼືຄັດລອກເອົາມາໄວ້ບ່ອນດຽວແລ້ວດັ່ງນີ້, ເວລາມີຄວາມຕ້ອງການ ໄປຊອກຫາເອົາກໍງ່າຍ.

ອັ້ນນີ້ນັບວ່າຫໍພຣະສມຸດໄດ້ ເປັນປະໂຫຍດແກ່ຊາດສາສະໜາ ນອກຈາກນີ້ ຫໍພຣະສມຸດຍັງໄດ້ພະຍາຍາມພິມໜັງສືອັນເປັນຄຳສັ່ງສອນໃນພຣະພຸດທະສາສະໜາອອກຈຳແນກແຈກຈ່າຍໃຫ້ພຸດທະບໍຣິສັດທັ້ງຫຼາຍໄດ້ຮ່ຳຮຽນ ເພື່ອຈະໄດ້ເປັນເຄື່ອງປະດັບສະຕິປັນຍາ ແລະເພີ່ມພູນສັດທາໃຫ້ແກ່ກ້າຂຶ້ນອີກເປັນອັນມາກ.

ບັດນີ້ຂ້າພະເຈົ້າເຫັນວ່າ ໜັງສືເລື່ອງພະເຈົ້າສິບຊາດ ເປັນເລື່ອງທີ່ພຸດທະບໍລິສັດ ລາວເຮົານີ້ນິຍົມຫຼາຍກວ່າເລື່ອງອື່ນໆ ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ປົງອາຊະຍາໃຫ້ ມະຫາສີລາ ວີຣະວົງສ໌ ແປ ແລະແຕ່ງອອກເປັນຄຳກອນລາວ ເພື່ອໃຫ້ເປັນທີ່ພໍໃຈຂອງຜູ້ຟັງທັ້ງຫຼາຍ ທັ້ງຈະເຂົ້າໃຈຄວາມໄດ້ງ່າຍກວ່າ ທີ່ຟັງຕາມເລື່ອງນິທານທັມມະດາອີກ.

ການຟັງເທດຟັງທັມ ຟັງຄຳສັ່ງສອນ ກ້າເຮົາບໍ່ເຂົ້າໃຈເນື້ອຄວາມແລະບໍ່ຈື່ຈຳໄດ້ ກໍບໍ່ສູ້ເປັນປະໂຫຍດ ຫຼືຈະວ່າບໍ່ໄດ້ບຸນກໍຖືກ ເພາະບໍ່ສາມາດນຳເອົາຄວາມຮູ້ນັ້ນໄວ້ປະຕິບັດຕາມໄດ້, ເມື່ອໄດ້ຟັງແລ້ວເຂົ້າໃຈເນື້ອຄວາມໄດ້ຕະຫຼອດແລະນຳເອົາໄປປະຕິບັດຕາມ ຈຶ່ງນັບວ່າເປັນຜູ້ຟັງດ້ວຍດີ ສົມກັບຄຳບາລີ ທີ່ເປັນພຸດທະພາສິດວ່າ:

ສຸສ໌ສູສັງ ລພເຕ ປັນຍັງ<br>
ຜູ້ຕັ້ງໃຈຟັງດ້ວຍດີ ຍ່ອມໄດ້ປັນຍາ ດັ່ງນີ້

ໃນທີ່ສຸດນີ້ ຂ້າພະເຈົ້າຫວັງພຣະໄທວ່າ ບັນດາທ່ານທີ່ເປັນພຸດທະມາມະກະ ທັງຫຼາຍ ຄົງມີຄວາມພໍໃຈ ແລະຍິນດີບູຊາເອົາໜັງສືນີ້ໄວ້ອ່ານໄວ້ຟັງທຸກບ້ານເຮືອນ ເພື່ອໄດ້ເປັນອາຈານຜູ້ເຕືອນ ສະຕິທຸກເວລາດ້ວຍ ແລະດ້ວຍອຳນາດຄຸນຂອງພຣະຣັດຕະນະໄຕຣອັນປະເສີດ ໄປປົກເກົ້າປົກກະໝ່ອມ ຂໍໃຫ້ທ່ານທັງຫຼາຍຜູ້ທີ່ເປັນພຸດທະມາມະກະ ຈົ່ງຢູ່ເຢັນເປັນສຸກ ປາສະຈາກທຸກຂະພັນຕະລາຍ ທຸກປະການເທີນ.

(ເຊັນພຣະນາມ) ສົມເດັດເຈົ້າຣາຊພາຄີໄນຣ໌ ເພັຊຣາຊ

ນາຍົກແຫ່ງພຸດທະບັນດິດສະພາປະເທດລາວ

ວຽງຈັນ ວັນທີ 1 ຊຸຍເຍ 1932

## ຄຳນຳ

ເມື່ອປະເທດລາວເຮົາໄດ້ຈັດການຕັ້ງຫໍພຸທະສາສນາໃຫ້ເປັນທີ່ຮວບຮວມໜັງສືເກົ່າໃໝ່ທັງຫຼາຍຂຶ້ນໄວ້ແລ້ວດັ່ງນີ້ ກໍນັບວ່າເປັນປະໂຍຊນ໌ອັນໃຫຍ່ແກ່ຊາດ ແລະສາສນາເຮົາຫຼາຍເຫຼືອທີ່ຈະພັນລະນາ ເພາະວ່າຖ້າຫາກບໍ່ຕັ້ງຫໍພຸທະສາສນາຂຶ້ນໄວ້ໃຫ້ເປັນບ່ອນຮວບຮວມໜັງສືແລ້ວ, ຕໍ່ໄປພາຍໜ້າບັນດາໜັງສືຕ່າງໆ ທີ່ມີຢູ່ໃນປະເທດເຮົາກໍຈະອັນຕະຣະທານເສື່ອມສູນໄປ ຍ້ອນວ່າຢູ່ກະຈັດກະຈາຍທົ່ວໄປແລະບໍ່ຕັ້ງໃຈຮັກສາ. ປະການນຶ່ງ ເມື່ອເວລາມີຄວາມຕ້ອງການໄປຊອກຫາກໍລຳບາກ, ຖ້າຫາກໄດ້ຮວບຮວມປຶ້ມໜັງສືອອກເອົາມາໄວ້ບ່ອນດຽວແລ້ວດັ່ງນີ້, ເວລາມີຄວາມຕ້ອງການໄປຊອກຫາເອົາກໍງ່າຍ. ຈຶ່ງນັບວ່າຫໍພຸທະສາສນາໄດ້ເປັນປະໂຍຊນ໌ແກ່ຊາດສາສນາເຮົາມາກ ນອກຈາກນັ້ນ ຫໍພຸທະສາສນາຍັງໄດ້ພຍາຍາມພິມພ໌ໜັງສື ອັນເປັນຄຳສັ່ງສອນໃນພຸທະສາສນາອອກຈຳແນກແຈກຈ່າຍໃຫ້ພຸທະບໍຣິສັທທັງຫຼາຍໄດ້ຮໍ່າຮຽນ ເພື່ອຈະໄດ້ເປັນເຄື່ອງປະດັບສະຕິປັນຍາ ແລະເພີ່ມພູນສັທທາໃຫ້ແກ່ຕົວຂຶ້ນອີກເປັນມາກ.

24/VII

# ຄຳນຳຂອງຜູ້ແຕ່ງ
# (ໃນການຈັດພິມຄັ້ງທີນຶ່ງ)

ໜັງສືເລື່ອງທະສະຊາດຊຶ່ງມີມາໃນຄຳພີຝ່າຍພຣະສູດຕັນຕະປິດົກ ເປັນໜັງສືທີ່ພວກພຸດທະສາສະນິກກະຊົນ ນິຍົມນັບຖືແລະຊອບຟັງເລື້ອຍໆ ເພາະຖືວ່າເປັນເລື່ອງທີ່ພຣະພຸດທະເຈົ້າໄດ້ຊົງພໍ່າເພັງບາຣະມີ 10 ປະການ ຄົບບໍລິບູນທັງ 10 ຊາດ.

ໃນເລື່ອງ 10 ຊາດນີ້ ເລື່ອງທີ່ພວກລາວເຮົາຖືເປັນສຳຄັນກວ່າເລື່ອງອື່ນໆນັ້ນຄືເລື່ອງ "ເວດສັນ ຕຣະຊາດົກ" ຈົນເກີດເປັນປະເພນີເຮັດບຸນຟັງເທດມະຫາຊາດຕະກະ ປະຈຳປີຂຶ້ນທຸກບ້ານເມືອງ.

ອາໄສຄວາມນິຍົມຂອງພຸດທະສາສະນິກກະຊົນສ່ວນນີ້ເປັນຕົ້ນເຫດ ສົມເດັດເຈົ້າຣາຊະພາຄິໄນຣ໌(ເພັຊຣາຊ) ອົງເປັນນາຍົກແຫ່ງພຸດທະບັນດິດສະພາປະເທດລາວ ຈຶ່ງຊົງໂຜດເກົ້າສັ່ງໃຫ້ອ້າພະເຈົ້າປະພັນ ນິທານທະສະຊາດນີ້ຂຶ້ນເປັນຄຳກອນ ເພື່ອຈະໃຫ້ເປັນທີ່ພໍໃຈຂອງພຸດທະບໍຣິສັດຜູ້ຊອບຟັງນິທານເລື່ອງນີ້ ທັງຈະໄດ້ເປັນເຄື່ອງເຕືອນສະຕິໃຫ້ລະລຶກເຖິງບາຣະມີ 10 ປະການ ທີ່ພຣະພຸດທະເຈົ້າໄດ້ພໍ່າເພັງມານັ້ນດ້ວຍ.

ໜັງສືເລື່ອງທະສະຊາດນີ້ກໍມີແພ່ຫຼາຍທົ່ວໄປທຸກບ້ານເມືອງແລ້ວ ແຕ່ຫາກວ່າຍັງບໍ່ໄດ້ມີຜູ້ໃດປະພັນຂຶ້ນເປັນຄຳກອນລາວ ມີແຕ່ເລື່ອງເວດສັນຕຣະຊາດົກເລື່ອງດຽວທໍ່ນັ້ນ ທີ່ເພິ່ນໄດ້ປະພັນເປັນກອນໄວ້ ແຕ່ກໍເປັນກອນເທດ ບໍ່ແມ່ນກອນອ່ານ ທັງມີສັບບາລີປົນຢູ່ທຸກບ່ອນດ້ວຍ ເຊິ່ງກ້າຜູ້ບໍ່ເຄີຍຟັງເຄີຍອ່ານ ໄປຊາກຟັງເຂົ້າແລ້ວ ກໍເຂົ້າໃຈຄວາມໄດ້ຍາກ.

ຢ່າງໃດກໍດີ ການທີ່ອ້າພະເຈົ້າຄຶດປະພັນເລື່ອງທະສະຊາດຂຶ້ນເປັນຄຳກອນນີ້ ນັບວ່າເປັນການເຫຼືອວິໄສຂອງອ້າພະເຈົ້າຢູ່ມາກ ເພາະອ້າພະເຈົ້າເອງກໍບໍ່ແມ່ນນັກຈິນຕະກະວີ ທີ່ມີຄວາມຮູ້ໃນທາງກາບກອນເລີຍ ດັ່ງນັ້ນຈຶ່ງເຊື່ອວ່າ ຖ້ອຍຄຳສຳນວນໃນໜັງສືນີ້ ຄົງຂາດເຂີນ ຫຼືບົກເບົາຢູ່ເປັນອັນມາກ ແລະ ຫວັງວ່າ ຄົງໄດ້ຮັບອະໄພຈາກທ່ານຜູ້ຮູ້ທັງຫຼາຍດ້ວຍ.

ອ້າພະເຈົ້າໄດ້ກ່າວມາແລ້ວໃນຂ້າງຕົ້ນວ່າ ພຣະພຸດທະເຈົ້າໄດ້ທົງພໍ່າເພັງບາຣະມີ 10 ປະການ ຄົບທັງ 10 ຊາດ ແຕ່ໃນຊາດນຶ່ງໆນັ້ນພະອົງໄດ້ທົງພໍ່າເພັງບາຣະມີຢ່າງນຶ່ງໃຫ້ຍິ່ງກວ່າຢ່າງອື່ນ ຕົວຢ່າງ ຊາດທີ່ພຣະອົງເປັນພຣະເຕເມຍະນີ້ ພຣະອົງໄດ້ພໍ່າເພັງ "ເນກຂັມມະບາຣະມີ" ຄືວ່າ ການອອກບວດ ໃຫ້ຍິ່ງກວ່າຢ່າງອື່ນ ເຫດນັ້ນຄົນທັງຫຼາຍຈຶ່ງວ່າ ຊາດເປັນເຕມີຍະ ພຣະອົງໄດ້ພໍ່າເພັງເນກຂັມມະບາຣະ ມີດັ່ງນີ້.

ແຕ່ທີ່ຈິງແລ້ວ ພຣະອົງໄດ້ພໍ່າເພັງຄົບທຸກປະການ ດັ່ງຈະຊີ້ໃຫ້ເຫັນໃນເລື່ອງທີ່ພຣະອົງເປັນພຣະເວດສັນຕຣະ ຕໍ່ໄປນີ້:

1. ການທີ່ພຣະອົງໃຫ້ທານທຸກໆຢ່າງ ຈົນຕະຫຼອດບໍຣິຈາກພຣະໂອຣົດ ແລະພຣະມະເຫສີ ເປັນທານຈັດເປັນ ທານະບາຣະມີ.

2. ການທີ່ພຣະອົງຫົງສະມາທານສີນໃນເວລາຈະອອກບວດ ຫຼືກ່ອນນັ້ນກໍດີ ຈັດເປັນ ສີລະບາຣະມີ

3. ການທີ່ພຣະອົງສະເດັດອອກບັບພະຊາເປັນລືສີ ຈັດເປັນ ເນກຂັມມະບາຣະມີ.

4. ການທີ່ພຣະອົງຫົງສາມາດທວາຍເຫດການລ່ວງໜ້າໄດ້ ເປັນຕົ້ນນັ້ນ ຈັດເປັນ ປັນຍາບາຣະມີ ; ຫຼືການທີ່ພຣະອົງໃຊ້ປັນຍາພິຈາລະນາໃຫ້ຮູ້ຈັກເຫດຜົນ ຂອງຄວາມບໍ່ທ່ຽງເປັນຕົ້ນຈັດເປັນ ປັນຍາບາຣະມີ

5. ການທີ່ພຣະອົງຫົງຕັ້ງປະທານຄວາມພຽນໄວ້ໃນອັນຈະໃຫ້ທານ ແລະຮັກສາສີນ ເປັນຕົ້ນນັ້ນ ຈັດເປັນ ວິຣິຍະບາຣະມີ

6. ການທີ່ພຣະອົງອົດກັ້ນຕໍ່ໂທສະໄດ້ໃນເວລາພຣາມຕີ ກັນທາ ຊາລີ ຕໍ່ໜ້ານັ້ນຈັດເປັນ ຂັນຕິບາຣະມີ

7. ການທີ່ພຣະອົງຕັ້ງຢູ່ໃນຄວາມສັດຈະ ຄວາມຊື່ນັ້ນຈັດເປັນ  ສັຈຈະບາຣະມີ

8. ການທີ່ພຣະອົງມີພຣະໄທຕັ້ງໝັ້ນຢູ່ໃນຄຸນຄວາມດີ ຈັດເປັນ ອະທິດຖານບາຣະມີ

9. ການທີ່ພຣະອົງຫົງເມດຕາກະລຸນາແກ່ປະຊາຊົນທຸກກ້ວນໜ້າ ຈົນສາມາດໃຫ້ທານຊ້າງມ້າ ລົດ ບຸດ ພັນລະຍາ ໄດ້ນັ້ນ ຈັດເປັນ ເມດຕາບາຣະມີ

10. ການທີ່ພຣະອົງມີພຣະໄທຕັ້ງໝັ້ນ ບໍ່ຫວັ່ນໄຫວໄປຕາມໂລກກະທັມທັງແປດປະການນັ້ນ ຈັດເປັນ ອຸເບກຂາບາຣະມີ.

ແຕ່ໃນຊາດນີ້ ພຣະອົງໄດ້ຫົງພໍາເພັງທານະບາຣະມີຍິ່ງກວ່າຢ່າງອື່ນໆ ແລະບາຣະມີ 10 ປະການທີ່ກ່າວມານີ້ ເປັນຄຸນນະທັມອັນປະເສີດ ທີ່ທຸກໆຄົນກໍມີສິດທີ່ພໍາເພັງໃຫ້ເກີດມີຂຶ້ນໃນຕົນໄດ້ ບໍ່ແມ່ນມີໄວ້ຈໍາເພາະແຕ່ພຣະພຸດທະເຈົ້າຈໍາພວກດຽວເລີຍ. ພຣະອັດຖະກະຖາຈານ ຜູ້ແຕ່ງຄໍາພີທະສະຊາດົກ ກໍມີຄວາມປະສົງຈະສະແດງບາຣະມີ 10 ປະການນີ້ເອງ ໃຫ້ປາກົດແກ່ຕາໂລກ. ເພາະສະນັ້ນ ຂ້າພະເຈົ້າຂໍແນະນໍາທ່ານຜູ້ອ່ານຜູ້ຟັງໄວ້ໃນທີ່ນີ້ວ່າ ການຟັງນິທານເຣື່ອງ ທະສະຊາດນີ້ ໃຫ້ຕັ້ງໃຈລະລຶກເຖິງບາຣະມີ 10 ປະການທີ່ພຣະພຸດທະເຈົ້າ ໄດ້ຫົງພໍາເພັງປະຕິບັດມານັ້ນ ເປັນເຄື່ອງເຕືອນໃຈ ຈິ່ງຈະນັບວ່າເປັນຜູ້ໄດ້ຟັງເລື່ອງທະສະຊາດ ຢ່າງແທ້ຈິງ.

ໃນທີ່ສຸດແຫ່ງຄໍາບັນລະຍາຍນີ້ ຂ້າພະເຈົ້າຂໍນ້ອມອຸທິດກວາຍສ່ວນກຸສົນ ໃນການທີ່ຂ້າພະເຈົ້າໄດ້ພະຍາຍາມສ້າງໜັງສືເລື່ອງນີ້ຂຶ້ນຈົນສໍາເລັດ ແດ່ສົມເດັດເຈົ້າຣາຊພະຄິໄນຣ໌ ເພັຊຣາຊ ເຈົ້າອົງເປັນນາຍົກ ແຫ່ງພຸດທະບັນດິດສະພາປະເທດລາວ ຜູ້ຊຶ່ງຫົງພຣະຄຸນອັນປະເສີດ ແລະດ້ວຍອໍານາດຂອງຄຸນພຣະຣັດຕະນະໄຕຣ ຂໍໃຫ້ ທ່ານທັງຫຼາຍຜູ້ທີ່ໄດ້ອ່ານໄດ້ຟັງໜັງສືນີ້ ຈົ່ງມີແຕ່ຄວາມສຸກສວັດສະດີ ທຸກທິວາຣາຕີເທີນ.

ສີລາ ວີຣະວົງສ໌ ປ. 5<br>ວຽງຈັນ ວັນທີ 1 ຊຸຍເຢ 1932

# ອາລຳພະກະຖາ

| | | | | |
|---|---|---|---|---|
| 001 | ສີສຸພະ | ມັງຄະລະເລີດລ້ຳ | ສິດທິເດດລືຊາ | |
| | | ບາໂກສຸດ | ຍອດຍານໄຕແກ້ວ | |
| | | ສະຫວັດສະດີນ້ອມ | ໃນທຳພຸດທະບາດ | |
| | ຄຸນພຣະ | ຍົກໃສ່ເກົ້າ | ຊຸລີໄວ້ຫວ່າງສຽນ | |
| 002 | ຂວບເມື່ອ | ຟ້າສະນັ່ນນ້າວ | ຮ້ອງເຮັ່ງລະດູຝົນ ພຸ້ນເຢີ | |
| | ເຊັນເຊັນ | ຊົນລະທາໄຫຼ | ເລັ່ງລິນລົງລົ້ນ | |
| | | ຜົນຜະຫລາສວ້າຍ | ແສນກໍກາງກົບ | |
| | ລ່ຳດູ | ພຶດຊະໂພດພ້ອມ | ເຜັງກ້ານເກື່ອນແກວ | |
| 003 | ຍາມນັ້ນ | ມະຫາເມກເຄົ້າ | ຄະນົງເນັ່ງບັງບົດ | |
| | ອາທິດ | ທວນທຽວລັບ | ຫຼ່ຽມສະເໜນບັງເບື້ອງ | |
| | | ສຸກະລາໂລກລ້ຳ | ລາສີສິງຫະມາດ | |
| | ອັດສະ | ບາມແມ່ນມ້າ | ຮວາຍຊະວ້າຊອບຄະດີ | |
| 004 | | ສັກກະຫຼາດລ້ຳ | ສອງຊົ່ວພັນວັດສາ | |
| | ຍາມນັ້ນ ມະຫາສີລາ ຄອງເຄທາ | | ຮ່ວມເຮືອນຮຽງນ້ອງ | |
| | ຕອງເຫັນ | ເບັນຈະຂັນທ້າ | ເພີງຊະລາມັດຈຸລາດ | |
| | ກັບທັງ | ຊາດພົບພ້ອມ | ໄພຂຸ້ນຄອບພະກາຍ | |
| 005 | ອັນວ່າສັດຢູ່ | ໃຕ້ລຸ່ມຟ້າ | ສາມໂລກເຮົາເຫັນ | ມານີ້ |
| | ຊື່ວ່າ | ຄວາມຕາຍແຂວນ | ຄູ່ຄົນຄາເບື້ອ | |
| | ແມ່ນຈັກ | ມີຍົດພ້ຽງ | ພາຍພົມພິມານເມກ | ກໍດີແລ້ວ |
| | ໃຜອາດ | ກອນໄກ່ຈ້າງ | ໜີລີ້ຫຼີກຕາຍ | ທ່ານເຮີຍ |
| 006 | ຍາມໃດ | ທາດສີ່ສ້ຽງ | ຂັນພາກພອຍໜີ | ດັ່ງນັ້ນ |
| | ແມ່ນຈັກ | ມີຄຳແສນ | ຮ່ອນໄລລາໄວ້ | |
| | ໃຜຜູ້ | ຕາຍໄປແລ້ວ | ຂອງໂຕເປັນຂອງເພິ່ນ | |
| | ລືຫ່ອນ | ຫາມຫອບທົ້ວ | ໄປໄດ້ດັ່ງມະໂນ | ທ່ານເຮີຍ |
| 007 | ອັນທີ່ | ຍັງທ່ຽງແທ້ | ບໍລິຈາກຈຳສິນ | |
| | | ສະມາທານທຳ | ໂທດເວນວາງເວັ້ນ | |
| | ອັນນີ້ | ເປັນສະບຽງເຂົ້າ | ສະໜອງນຳເທົ້າຊົ່ວ | |

| | | | | |
|---|---|---|---|---|
| | | ມອບບໍ່ກົ້ວ | ກະທຳຮ້າຍຮໍ່ຊິງ | ໄດ້ແລ້ວ |
| 008 | ດັ່ງນັ້ນຈຶ່ງໄດ້ | ແຕ້ມແຕ່ງຂໍ້ | ໄຂປ່ອງແປວລະທັດ | |
| | ຕາງຕື່ມ | ແສງທຽນທອງ | ເທດທຳພຸດໂທເຈົ້າ | |
| | ໃຜຜູ້ | ມີຜະຫຍາຮູ້ | ຮຽນກອງເກີງຂະໜາດ | |
| | ຍາໄດ້ | ຫົວໄຄ່ແຂ້ວ | ຂວັນເຮືອງຮໍ່ຮຽມ | ແທ້ເນີ |
| 009 | ຮຽມນີ້ບໍ່ແມ່ນ | ລູກເຜົ່າເຊື້ອ | ສະກຸນໜໍ່ໃນນະຄອນ | |
| | ລືຫ່ອນ | ຮຽນເຫັນເກີງ | ໂມກຂະທຳທັງເກົ້າ | |
| | ເຮົາຫາກ | ເນົາໃນຫ້ອງ | ກຸງສີສັດຕະນາກ | |
| | ລຳບາກ | ເປັນກ່ຳພ້າ | ພົງເຊື້ອກໍບໍ່ມີ | ເພື່ອນເຮີຍ |
| 010 | ບັດນີ້ຂ້າຂໍ | ນ້ອມເກດເກົ້າ | ທູນເທບພະເທພາ | |
| | | ທັງໄຂສວນ | ເມຂະຫຼາລວງຊ້ອຍ | |
| | ແມ່ນວ່າ | ໂສສະຫຼະຊັ້ນ | ອະສັນຍາພົມມະໂລກ | ກໍດີທ້ອນ |
| | ກັບທັງ | ຄຸດທະນາກນ້ຳ | ນາງທ້າວເທບພະຄຸນ | |
| 011 | | ເຊີນຊ່ອຍຊີ້ | ແປງກາບກອນປະຈິດ | ແດ່ເນີ |
| | ໄວ້ແກ່ | ໄຕຕອງປຸນ | ແວ່ນແຍງຍາມແຄ້ນ | |
| | ແມ່ນວ່າ | ໂພຍແສນຊັ້ນ | ສັດຕູມານມາບຽດ | ກໍດີທ້ອນ |
| | ຂໍໃຫ້ | ອຳນາດຄຸ້ມ | ຄຸນເກື້ອເກື່ອຍໜີ | ແດ່ເນີ |
| 012 | ບັດນີ້ຂ້າຈັກ | ປຸນກ່າວແກ້ | ແປປັ່ນນິທານທຳ | ກ່ອນແລ້ວ |
| | ເປັນທີ່ | ຍູແຍງຝູງ | ພໍ່າເຜັງພາຍຊ້ອຍ | |
| | ຄວນທີ່ | ອັດສະຈັນລ້ຳ | ໂລກາກົງໂລກ | |
| | ມີໃນ | ທົດສະຊາດແທ້ | ທຽວໃຊ້ສິ່ງເວນ | ທ່ານເຮີຍ |

# ນະຄະຣາບັ້ນ

| | | | |
|---|---|---|---|
| 013 | ຍັງມີ | ນັກຄະເລດລ້ຳ | ຊັ້ນຊື່ພະລານະສີ |
| | | ມີນິຄົມຄາເມ | ໝື່ນກຸ້ນແກວລ້ອມ |
| | | ຊຽງຫຼວງລົ້ນ | ລູງລັງລ້ານຍ່ານ |
| | | ນ້ຳແຜ່ລ້ອມ | ຕາງຕ້າຍຊິ່ວພັນ |
| 014 | | ຣຸ່ງຄ່ຳເຊົ້າ | ຊາວເທດ ທຽວສະເພົາ |
| | ຕັ້ງວ່າ | ອຸດົມໂດຍ | ດັ່ງນະຄອນຄວງຟ້າ |
| | ມະຫາ | ກະສັດເຈົ້າ | ກາສີສະເຫວີຍຣາດ |
| | | ພື້ນທະແຫຼ່ງຫຼ້າ | ລືລ້ຳເລີດຄຸນ |
| 015 | | ນັກຄະເລດທ້າວ | ທຽມດັ່ງດາວະດຶງ |
| | | ດູຕະການງາມ | ຣຶດຣາມເຮືອງພົ້ນ |
| | | ພິມານແມ້ງ | ເມືອງສວງເສີມເຜົ່າ |
| | | ປະດັບຊໍ່ຟ້າ | ວັນເຂັ້ມຂ່າຍກະດຶງ |
| 016 | | ເດຽລະດາດດ້ວຍ | ຫໍມາດ ມົນທຽນ |
| | | ເຮືອງເຮືອງແສງ | ສ່ອງດາວດາເຫຼື້ອມ |
| | | ມະເຫສີເຈົ້າ | ຈັນທາທຽມອາດ |
| | | ສີຍິ່ງພ້ຽງ | ປຸນປັ້ນແປກຂຽນ |
| 017 | | ເນື້ອໜຸ່ມພ້ຽງ | ປຸນນາກນົງບານ |
| | | ເກສາ ປະສົງ | ລູບມັນມວຍຖົ້ວ |
| | | ບໍລິພານ ເໜົ້າ | ໃນປາງນັບໝື່ນ |
| | | ປະດັບເຄື່ອງຮ້ອຍ | ຣຽງປ້ອນປ່ຽນ ສະຫຼາ |
| 018 | ພູເບດ | ສ້າງຍ່ານຟ້າ | ນະຄອນໃຫຍ່ຍູກະເສີມ |
| | ເມືອງເມືອງ | ພາຍພອນຂາວ | ຢູ່ໂຮງຣຽງມ້າ |
| | | ອາຊະໄນພ້ອມ | ພໍແສນສິບສວ່ານ |
| | | ນາຍແອບຟ້ອນ | ພະລານກວ້າງແກວ່ງແພນ |
| 019 | | ຣຸ່ງຄ່ຳເຊົ້າ | ອາມາດຊຸມສະໜາມ |
| | | ໂດຍເດີມປະກົມ | ຊົ່ວລາງລືໄວ້ |
| | | ໃນນະຄອນກວ້າງ | ລະງົມຄົນເຄົ້າຄື່ນ |
| | | ທຸກປະເທດທ້າວ | ທຽວຂຶ້ນຂາບກວາຍ |



ຣູປ ພຼະນະຄອນ ພາຣານະສີ ທີ່ສົມ-
ເດັຈ ພຼະຍາກາສີກະຣາຊ ເສວີຍ ຣາຊສົມບັຕິຢູ່-

| | | | | |
|---|---|---|---|---|
| 020 | | ລືເດດໄທ້ | ທັງທະວີບເອົາຂາມ | |
| | | ພັນເມືອງມາ | ສ່ວຍທອງທັງຄ້າຍ | |
| | | ຍູສະໜຸກເວັ້ນ | ອິນລະທິນຫາຍໂສກ | |
| | ທີ່ວ່າ | ພູວະນາດໄຮ້ | ແນວນ້ອຍໜໍ່ເມືອງ | |
| 021 | ກໍບໍ່ | ມີເຜົ່າເຊື້ອ | ເປັນໜໍ່ໃນນະຄອນ | |
| | ພູທອນ | ທົ່ງອາວອນ | ຮໍ່າເພິງພັນຊັ້ນ | |
| | | ວັນຄືນທ້າວ | ທຽມນາງໃນອາດ | |
| | | ຮັກເຮົ່ງພັ້ນ | ຕະໂບມນ້ອຍແນບທວງ | ແທ້ແລ້ວ |
| 022 | ຂວບເມື່ອ | ຟ້າສະບັ່ນອີ້ | ເອີ້ນລູກເມືອແມນ | ພຸ້ນເຢີ |
| | | ເທມະກາ ເກີງ | ກາຍລະດູເດືອນອ້າຍ | |
| | ເມື່ອນັ້ນ | ທັ້ງຫຼາຍພ້ອມ | ເສນາ ໃນນອກ | |
| | | ເອົາຂ່າວອໍ້ | ຄໍາແຄ້ນຕໍ່ກັນ | |
| 023 | ບັດນີ້ | ເຈົ້າອະໜ່ອມ ນ້າວ | ຜູ້ເພິ່ງຊີວິດເຮົານີ້ | |
| | ກໍບໍ່ | ມີຊາຍເຊັ່ງ | ສືບແນວແທນສ້າງ | |
| | ຢ້ານທີ່ | ຂາງເມືອງເສົ້າ | ເສຽພົງພູວະນາດ | |
| | | ນະຄະເລດ ຮ້າງ | ພາຍຊ້ອຍເສື່ອມສະກຸນ | ເພື່ອນເຮີຍ |
| 024 | ເທື່ອນີ້ເຮົາຄວນ | ຂຶ້ນຂາບທ້າວ | ທູບແອ່ວອິງກະສັດ | |
| | ເຊີນພຣະ | ຜາຍພອນທິບ | ໜຽວເອົາອົງຊ້ອຍ | |
| | | ຂຸນຈາແລ້ວ | ລີລາ ພ້ອມພາບ | |
| | ຂຶ້ນຂາບ | ພຣະຍ່ໍາເກົ້າ | ເນືອງນ້ອມນອບກອນ | |
| 025 | | ພູວະນາດເຈົ້າ | ທັກທ່ຽວການພະລັນ | |
| | ວັນນີ້ | ຂຸນເມືອງມາ | ຢູ່ເຜົ້ງພຽງພ້ອມ | |
| | ຮູ້ວ່າ | ອິນລະທິນເອົ້າ | ລຸງເມືອງມົວຂຸ່ນ | ຈິງລື |
| | ຫຼືວ່າ | ສູທ່ານທ້າວ | ມາຮ້ອນເຫດໃດ | ນັ້ນເດ |
| 026 | | ຂຸນຂາບກົ້ມ | ທູບອາດອົງກະສັດ | |
| | ກໍບໍ່ | ເຄືອງແຄນສັງ | ສໍ່າມານມາຕ້ອງ | |
| | ແຕ່ວ່າຝູງອ້າ | ເຄືອງແຄນດ້ວຍ | ດອມອົງພູວະນາດ | |
| | ອໍໃຫ້ | ພຣະບາດເຈົ້າ | ກູນາຂ້າໄພ່ພົນ | ແດ່ທ້ອນ |
| 027 | ບັດນີ້ | ເມືອງມິ່ງກວ້າງ | ລ້ານຊິ່ວແສນສາຍ | |
| | | ມົນທຽນ ມີ | ພື້ນນາງນອນລ້ອມ | |

| | | | | |
|---|---|---|---|---|
| | ລັດຕະ | ນາພອນພ້ອມ | ເພັງ ສາງແສນສິ່ງ | ພຣະຍາເອີຍ |
| | ທີ່ບໍ່ | ມີເຜົ່າເຊື້ອ | ທົງສ້າງສິບສະກຸນ | ພຣະເອີຍ |
| 028 | ດັ່ງນັ້ນຂໍໃຫ້ | ພູເບດເຈົ້າ | ຈັດສໍ່າສາວສະໜົມ | |
| | | ທັງນາງເມືອງ | ໜ່ຽວເອົາອົງຊ້ອຍ | |
| | ຢ່າໃຫ້ | ເສຽກະສັດເຊື້ອ | ຊາຍເຊັ້ງຜູ້ປະເສີດ | |
| | | ລົງເກີດດ້ວຍ | ທອມຫຸ້ມໄພ່ພົນ | ແດ່ທ້ອນ |
| 029 | ເມື່ອນັ້ນ | ມ່າຍມ່າຍໜ້າ | ພຣະຍາໃທຍ່ກາສີ | |
| | | ຈາດອມຂຸນ | ແມ່ນຄອງຄໍານີ້ | |
| | ຂອບທີ່ | ແສນເມືອງພ້ອມ | ປຸນປອງເປັນປະໂທຍດ | |
| | ເຮົາຈັກ | ຕ້ານແຕ່ງໃຫ້ | ຊຸມນ້ອງປາກະໜາ | ດອກນາ |
| 030 | ຄ້ອມວ່າ | ພຣະກ່າວແລ້ວ | ຂຸນເລີກລາລົງ | |
| | ພູມີ | ເມືອເມັງຊອນ | ສັ່ງນາງໃນຫ້ອງ | |
| | ເທື່ອນີ້ຂໍໃຫ້ | ທັງປວງນ້ອງ | ປາກະໜາເກິງທີບ | |
| | | ຂໍລູກແກ້ວ | ບຸນກວ້າງເກີດດອມ | ແດ່ທ້ອນ |
| 031 | ນາງໃດ | ບຸນປະກອບໄດ້ | ບຸດຕະລາດຊາຍເຊັ້ງ | ດັ່ງນັ້ນ |
| | ເຮົາຈັກ | ປຸນປອງເປັນ | ເອກໂທນທັນອ້າງ | |
| | ເມື່ອນັ້ນ | ນາງເມືອງພ້ອມ | ສະໜົມໃນຊ້ອຍຊື່ນ | |
| | | ຊະຊ່ອນໜ້າ | ໝາຍໄດ້ດັ່ງຄະນິງ | |
| 032 | ພໍເມື່ອ | ວັນວິ່ງຄ້ອຍ | ລັບລ່ຽມລົງແລງ | ພຸ້ນເຍີ |
| | ພູມີ | ເມືອຮາງຄໍາ | ສວ່າຍສີສິງນໍ້າ | |
| | | ສາວສະໜົມນ້ອຍ | ນໍາແທນທັດກະບາດ | |
| | ພ່ອງກໍ | ມາລູບໄລ້ | ຈັບທະຄູ້ເຄື່ອງຫອມ | |
| 033 | | ແລ້ວຜ່ຽນຜ້າ | ສະເດັດສູ່ສິງຫານ | |
| | ນາຍຄົວ | ຍໍພານຄໍາ | ພ່າງແລງລົງຕັ້ງ | |
| | | ອົງກະສັດເຈົ້າ | ສະເຫວີຍເຜົາພໍຊື່ນ | |
| | ດີແກ່ | ນາງໜຸ່ມເຝົ້າ | ຂວາຊ້າຍແກວ່ງວີ | |
| 034 | | ແລ້ວເລີກມ້ຽນ | ສະເດັດພາກພາຄໍາ | |
| | | ລໍາລໍາສາວ | ສິ່ງສະຫລາກວາຍເຈົ້າ | |
| | | ທຸມະວັນພ້ອມ | ພານທອງທູນອາດ | |
| | | ລືນາດທ້າວ | ທວຍເທົ້າຄ່ອຍສະເຫວີຍ | ເຈົ້າເຮີຍ |

| | | | | |
|---|---|---|---|---|
| 035 | ຟັງສຽງ | ລົມສະຫວາດໄມ້ | ລ້ຳລ່ວງລະດູໜາວ | ພຸ້ນເຢີ |
| | ສາຍຝົນ | ລົບທະລາໄຫລ | ຫຼັ່ງຮວາຍຮຳພື້ນ | |
| | ຄືນນັ້ນ | ທັງປວງນ້ອງ | ສະໜົມນາງໃນນິເວດ | |
| | ພ້ອມກັນ | ອໍລູກແກ້ວ | ບຸນກວ້າງເກີດດອມ | ແທ້ແລ້ວ |
| 036 | ແຕ່ນັ້ນ | ອໍລະໃໝ່ໜ້າ | ນາງນາດຈັບທາ | |
| | ນາງກໍຊົງ | ສະມາທານສິນ | ພ່ຳພາວະນານ້ອມ | |
| | ແລ້ວຈິ່ງ | ອະທິດຖານເຫົ້າ | ເກິງອົງອິນທະລາດ | |
| | | ອໍໝໍ່ຟ້າ | ບຸນກວ້າງເກີດດອມ | ແດ່ທ້ອນ |
| 037 | ອໍໃຫ້ | ເປັນຍອດແກ້ວ | ຕົນປະເສີດສັບພັນຍູ | |
| | ອຸດົມ | ໂດຍບຸນຄຸນ | ຊື່ໄກກຽນກວ້າງ | |
| | ຄ້ອມວ່າ | ອະທິດຖານແລ້ວ | ໄສຍາໃນອາດ | |
| | ເລີຍເລົ່າ | ຮ້ອນຮອດຫ້ອງ | ທຳທ້າວເທບພະອິນ | |
| 038 | | ທິບພະອາດໄທ້ | ເທວະລາດເລີຍແຂງ | |
| | | ອາຍຟອງຟົດ | ພຸງແປວເປັນກະດ້າງ | |
| | ເມື່ອນັ້ນ | ພັນຕາໃຊ້ | ສໍລະຍານແຍງໂລກ | |
| | ກໍຈິ່ງ | ເຫັນແຈ່ມເຈົ້າ | ນາງນ້ອຍປາກະໜາ | |
| 039 | ອິນກໍ | ຕັດສ່ອງຮູ້ | ຄຳປາກະໜານາງ | |
| | ແລ້ວຈິ່ງ | ທັນເທພາ | ພ່ຳມວນມາເຕົ້າ | |
| | ບັດນີ້ໃຜຜູ້ມີ | ປະສິງສ້າງ | ຊົມພູສະເທວີຍລາດ | |
| | | ເປັນມິ່ງເຄົ້າ | ພາຍໃຕ້ແຕ່ງການ | ທ່ານເຮີຍ |
| 040 | ດຽວນີ້ຍັງມີ | ເຍົາວະຍອດແກ້ວ | ກາສີລາດລາຊາ | |
| | ທູນທຽນ | ອໍບຸດຕາ | ໝໍ່ທຳລົງຕຸ້ມ | |
| | ໃຜຈັກ | ຄວນອັນສ້າງ | ສົມພານເຜັງທິບ | |
| | | ດອມທ່ານທ້າວ | ທອງລ້ານໂລກຄົນ | ທ່ານເຮີຍ |
| 041 | ຄ້ອມວ່າ | ອິນກ່າວແລ້ວ | ທວຍເທບທັງຫຼາຍ | |
| | | ທູນເທໂວ | ກະລ່າວກົວທັງຄ້າຍ | |
| | ຍັງທໍ່ | ສາຍສະໝອນແກ້ວ | ພະສຸລາລູກມິ່ງ | ພຣະອິນນັ້ນ |
| | | ປຸນກ່າວແກ້ | ພຣະອິນໄທ້ທີ່ເຊົ້ງ | |
| 042 | ຄັນວ່າ | ພຣະໂພດແທ້ | ທັງກະໂອກລືອິນ | ໄດ້ເດ |
| | ອໍແກ່ | ຈອມຄຸນຜາຍ | ຜໍ່ແລເລັງອ້າ | |

| | | | | |
|---|---|---|---|---|
| | ຍາມໃດ | ເວລາຮ້າຍ | ຮາວິບັງບຽດ | |
| | ຂໍໃຫ້ | ເຈົ້າແຜ່ນຟ້າ | ຟັງຮູ້ຮ່ຳພະໄທ | ແດ່ເນີ |
| 043 | ໂລກນີ້ | ບໍ່ປະເສີດແທ້ | ທຸກຍິ່ງເຫຼືອຫຼາຍ | |
| | ຂໍພໍ່ | ຜາຍພອນເກີງ | ເມື່ອປຸນປາງຮ້ອນ | |
| | ເມື່ອນັ້ນ | ພັນຕາຕ້ານ | ແຖມພອນພ້ອມກ່າວ | |
| | | ຮັກລູກແກ້ວ | ຈອມຊ້ອຍສິ່ງລິງ | |
| 044 | | ຍາບຍາບພ້ອມ | ພົນເທບພະວາລາ | |
| | | ນຳແຫນຫັດ | ກະບາດລິງລາຟ້າ | |
| | | ເກີງແກວຊັ້ນ | ຊຽງຂວາງຂ້ອນຮຸ່ງ | |
| | | ຈະຕຸໂລກລ້ອມ | ລະວັງຊັ້ນສູ່ພາຍ | |
| 045 | ພຣະກໍ | ເຂົ້າຮ່ວມຫ້ອງ | ນາງບາດຈັນທາ | |
| | ແມ່ນວ່າ | ມົນຕີເຂົ້າ | ໝູ່ເມັງຫວຍທ້າວ | |
| | ຝູງໝູ່ | ເທພາເຂົ້າ | ກໍເອົາຄັບພະວິກ | |
| | | ທັງຫ້າຮ້ອຍ | ກະບວນລ້ຳຫຼາກຫຼາຍ | |
| 046 | ອັນວ່າ | ພິເສດເນື້ອ | ນາງບາດຈັນທາ | |
| | ນາງກໍ | ທົ່ງນິມິດ | ເມື່ອນອນລະນິງໄດ້ | |
| | ຝັນວ່າ | ມີພິທູນເຂົ້າ | ຄຸງທໍເຮືອງຮຸ່ງ | |
| | | ນ້ອຍນຶ່ງເສົ້າ | ແສງແກ້ວກ່ຳຄຳ | |
| 047 | | ນາງແກວ່ງກຶ້ມ | ເທທອດອາໄລ | |
| | | ພໍປະມານເລີຍ | ສ່ອງສີແສງກ້າ | |
| | | ຈັນທາໄທ້ | ເທວີສະດຸ້ງຕື່ນ | |
| | ນາງກໍ | ຄຶດຮຸ່ງຮູ້ | ຄະນິງໄວ້ບໍ່ລືມ | |
| 048 | ຟັງຍິນ | ເຄົ້າຄຽນໄມ້ | ຍາມຮຸ່ງສູບສວາຍ | ພຸ້ນເຍີ |
| | ນາງກໍ | ຜາຍຄຶງຄວນ | ສູ່ລິນທະລາລ້າງ | |
| | | ສາວສຸລາງນ້ອມ | ຝືນພອນພິລູບ | |
| | | ແລ້ວກ່າຍສົ້ນ | ສີກ້ຽງເກິ່ງຄວນ | |
| 049 | ພໍເມື່ອ | ວັນວູ່ຂຶ້ນ | ພົ້ນຂອບພະຄີລີ | ພຸ້ນເຍີ |
| | ພູມີ | ເມືອເມັງຄຳ | ແທ່ນລາຍເກີຍກວ້າງ | |
| | | ທັງປວງຂ້າ | ຂຸນເມືອງ ຢຳພຣະລາດ | |
| | | ປະດັບຢູ່ເຝົ້າ | ຊະລອນນົ້ວນັ່ງກັນ | |

| | | | | |
|---|---|---|---|---|
| 050 | ເມື່ອນັ້ນ | ເຍົາວະຍອດແກ້ວ | ຕົນປະເສີດມະເຫສີ | |
| | | ບູເນືອຜາຍ | ລ່ວງເມືອເກີຍກວ້າງ | |
| | | ສາວສະໜິມນ້ອມ | ບຳແທນທັດກະບາດ | |
| | ນາງກໍ | ຂຶ້ນຂາບຜູ້ | ຜົວແກ້ວກ່າວຄະດີ | |
| 051 | | ພຣະພີ່ເຈົ້າ | ທັກທ່ຽວການພະລັບ | |
| | ນາງກໍ | ທູນນິມິດ | ຄູ່ອັນເອົາຕ້ານ | |
| | ເມື່ອນັ້ນ | ພູບານແຈ້ງ | ຈານາງໂລມລູບ | |
| | | ນ້ອງຢ່າແຄ້ນ | ຄຳຮ້າຍບໍ່ຮ່າງມີ | ພີ່ນາ |
| 052 | ອັນນີ້ | ເທບພະທ່ອນທ້າວ | ທົ່ງໂຜດພອນທິບ | |
| | ຮອຍຈັກ | ມີຊາຍເຊື້ງ | ເກີດເນົາໃນທ້ອງ | |
| | | ບຸນຫຼາຍລົ້ນ | ລືສິນສັກໃຫຍ່ | |
| | ໂດຍດັ່ງ | ນ້ອງໜ່ຽວນ້ອມ | ທຽນອ້າງແອ່ວເອົາ | ນັ້ນແລ້ວ |
| 053 | | ພຣະກ່າວແລ້ວ | ນາງຂາບຂໍພອນ | |
| | ແລ້ວຈຶ່ງ | ລາຜົວຂວັນ | ຕ່າວຄືນຫາຫ້ອງ | |
| | ພໍເມື່ອ | ຫຼາຍເດືອນໄດ້ | ນາງທົ່ງຄັບພະວິກ | |
| | | ພຣະພີ່ເຈົ້າ | ແພງພ້ຽງພະເນດຕົນ | ນັ້ນແລ້ວ |
| 054 | | ຮຸ່ງຄ່ຳເຊົ້າ | ພຣະອົງແນບນອນແຝງ | |
| | ທັ້ງເລົ່າ | ວາງນາງໃນ | ຢູ່ເວນລະວັງນ້ອຍ | |
| | | ປົກກະຕິແທ້ | ທຳພຽນເພີ່ງນາດ | |
| | ບໍ່ໃຫ້ | ພຣະມິ່ງຕົ້ນ | ເຄືອງແຄ້ນຮ່ອມໃດ | |
| 055 | ຜໍ່ເຫັນ | ຊະໃບ່ຟ້າ | ໄຫຼຜ່ານພູພານ | ຜຸ້ນເຍີ |
| | | ລະດູເດືອນແຖມ | ກ່າຍມາເກີ່ງເກົ້າ | |
| | | ສາວກະສັດເຈົ້າ | ທົ່ງພາພ້ອມແກ່ | ມາແລ້ວ |
| | ພໍເມື່ອ | ອະມຸດຕະໂຊກກ້າ | ໄຊໂຍແພ້ໝູ່ມານ | |
| 056 | | ລຶກແລ່ນຕ້ອງ | ເຕັ່ງໜ່ວຍມະຫາອຸດ | |
| | ນະວະ | ພູມພໍສູນ | ສິ່ງຈອບຈວນແຈ້ງ | |
| | | ເດືອນທົກຕັ້ງ | ພໍເພັ່ງສິບຫ້າຄ່ຳ | |
| | | ພຣະແມ່ເຈົ້າ | ຈວນທ້ອງທອດນອນ | |
| 057 | ເມື່ອນັ້ນ | ຝູງແມ່ລ້ຽງ | ຮີບເຮັ່ງເຮວປຸນ | |
| | | ຍໍພາລຽນ | ຮາດທະນາເຊີນຊ້ອງ | |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ